

# ສຳເລັດການເຂົ້າຮ່ວມກອງປະຊຸມຮອງລັດຖະມົນຕີການເງິນ ແລະ ຮອງຜູ້ວ່າການທະນາຄານກາງອາຊຽນ+3 ໃນວັນທີ 21 ຕຸລາ 2021

# ASEAN+3 Finance and Central Bank Deputies' Meeting (AFCDM+3)







ໃນວັນທີ 21 ຕຸລາ 2021 ທ່ານ ນ. ວັດທະນາ ດາລາລອຍ ຮອງຜູ້ວ່າການ ທຫລ ພ້ອມດ້ວຍຄະນະໄດ້ສຳເລັດການເຂົ້າຮ່ວມກອງປະຊຸມຮອງລັດຖະມົນຕີການເງິນ ແລະ ຮອງຜູ້ວ່າການທະນາຄານກາງອາຊຽນ+3 ຜ່ານລະບົບທາງໄກ (ASEAN Finance Ministers and Central Bank Deputies' Meeting: AFCDM+3) ພາຍໃຕ້ການເປັນປະທານຮ່ວມຂອງປະເທດ ສ. ເກົາຫຼີ ແລະ ບຣູໄນ ດາຣູສຊາລາມ. ຜູ້ເຂົ້າຮ່ວມກອງປະຊຸມດັ່ງກ່າວ ປະກອບ

ດ້ວຍຮອງລັດຖະມົນຕີການເງິນ ແລະ ຮອງຜູ້ວ່າການທະນາຄານກາງຂອງບັນດາປະເທດສະມາຊິກອາຊຽນ+3, ອົງການຕິດຕາມເສດຖະກິດມະຫາພາກອາຊຽນ+3 (AMRO), ອົງການການເງິນສາກົນ (IMF), ທະນາຄານພັດທະນາອາຊີ (ADB) ແລະ ກອງເລຂາອາຊຽນ (ASEC).

ກອງປະຊຸມ ໄດ້ປຶກສາຫາລື ແລະ ແລກປ່ຽນທັດສະນະກ່ຽວກັບສະພາບການພັດທະນາເສດຖະກິດມະຫາພາກຂອງພາກພື້ນອາຊຽນ+3 ພ້ອມທັງການສ້າງຄວາມເຂັ້ມແຂງໃຫ້ແກ່ການຮ່ວມມືຂະແໜງການເງິນອາຊຽນ+3. ກອງປະຊຸມໄດ້ຮັບຮອງເອົາການປັບປຸງອັດຕາດອກເບ້ຍອ້າງອີງຂອງກອງທຶນການຮ່ວມມືຫຼາຍຝ່າຍພາຍໃຕ້ຂໍ້ລິເລີ່ມຊຽງໃໝ່ (CMIM); ກົນໄກການຈັດຕັ້ງປະຕິບັດການປະກອບທຶນເປັນສະກຸນເງິນທ້ອງຖິ່ນ (LCY). ນອກນີ້, ຍັງໄດ້ຮັບຮອງແຜນວຽກບູລິມະສິດປະຈໍາປີ 2022 ແລະ ແຜນງົບປະມານປະຈໍາປີ 2022 ຂອງອົງການ AMRO; ແລະ ວຽກງານຂໍ້ລິເລີ່ມຕະຫຼາດພັນທະບັດອາຊີ (ABMI) ເພື່ອສົ່ງເສີມການອອກພັນທະບັດເປັນສະກຸນເງິນທ້ອງຖິ່ນຂອງອາຊຽນ+3.

ທ່ານ ວັດທະນາ ດາລາລອຍ, ຮອງຜູ້ວ່າການ ໄດ້ມີຄໍາເຫັນສະໜັບສະໜູນບັນດາຂໍ້ລິເລີ່ມ ເພື່ອສ້າງຄວາມເຂັ້ມແຂງກົນໄກກູ້ຢືມອາຊຽນ+3 ພາຍໃຕ້ກອງທຶນ CMIM ແລະ ການສ້າງຄວາມເຂັ້ມແຂງອົງການ AMRO. ກອງປະຊຸມ AFCDM+3 ໄດ້ສໍາເລັດຢ່າງຈົບງາມ ທ່າມກາງການປະກອບຄໍາເຫັນຂອງປະເທດສະມາຊິກຢ່າງຟົດຟື້ນ ເພື່ອເສີມຂະຫຍາຍການຮ່ວມມືໃນພາກພື້ນໃຫ້ມີປະສິດທິພາບ ແລະ ແໜ້ນແຟ້ນກວ່າເກົ່າ.

// ໂດຍ: ກົມຮ່ວມມືສາກົນ ທຫລ

**ຢູ່ເມືອງລາວໃຊ້ເງິນກີບລາວ**